# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 6 ມີນາ 2004 ( 3-6-2004)

---

## <u>ພຣະເຢຊູ: ຊົງເຫນືອກວ່າຜູ້ປະກາດພຣະທັມ</u>

<u>ຂໍ້ພຣະຄັມພີໃນບົດຮຽນ:</u> ມາຣະໂກ 8:27-30; ກິຈການ 3:17-26

<u>ພຣະຄັມພີແຫ່ງຄວາມຈິງ:</u> ເຖິງແມ່ນວ່າ ພຣະເຢຊູຈະຖືກນຳມາສົມທຽບກັບຜູ້ປະກາດພຣະທັມຄົນອື່ນໆ, ພຣະອົງຊົງເຫນືອກວ່າສເມີ-ພຣະອົງຊົງເປັນພຣະຄຣິດ ຜູ້ຊົງອະພັຍບາບຂອງຜູ້ທີ່ຍອມຖິ້ມໃຈເກົ່າເອົາໃຈໃຫມ່ແລ້ວຫລົບລ່າວຕ່າວຄືນ

<u>ຜົນສະທ້ອນຕໍ່ຊີວິດ:</u> ບົດຮຽນນີ້ຈະຊ່ອຍທ່ານໃຫ້ຢັ່ງຮູ້ວ່າ ພຣະເຢຊູຊົງເປັນພຣະຄຣິດ ຜູ້ຊົງອາພັຍບາບຂອງຜູ້ທີ່ຍອມຖິ້ມໃຈເກົ່າເອົາໃຈໃຫມ່ແລ້ວຫລົບລ່າວຕ່າວຄືນ

## <u>ເປັນຫຍັງຂ້າພະເຈົ້າຄວນຈະເຊື່ອວ່າພຣະເຢຊູນັ້ນຊົງເຫນືອກວ່າຜູ້ປະກາດພຣະທັມ?</u>

ແຊມໄດ້ຖາມເພື່ອນຂອງລາວວ່າ, " ເຈົ້າຄິດວ່າມີແຕ່ທາງຂອງພຣະເຢຊູອົງດຽວເທົ່ານັ້ນບໍທີ່ຈະນຳໄປຫາພຣະເຈົ້າ?" ອານົນຕອບໄປວ່າ, " ໃນໂລກນີ້ມີຫລາຍສາສນາ, ແຕ່ລະກຸ່ມກໍມີຜູ້ນຳຂອງສາສນານັ້ນ ຕ່າງກໍປະກາດວ່າມີຜູ້ຕິດຕາມຢ່າງຫລວງຫລາຍ ແລະຕ່າງກໍອ້າງວ່າສາສນາຂອງຕົນນັ້ນເປັນທາງແທ້. ແຕ່ເຈົ້າກັບເວົ້າວ່າ ຈຳເປັນຈະຕ້ອງເຊື່ອໃນພຣະເຢຊູອົງດຽວເທົ່ານັ້ນ. ແມ່ນຫຍັງທີ່ເຮັດໃຫ້ເຈົ້າເຊື່ອວ່າ ພຣະເຢຊູນັ້ນວິເສດແທ້?"
ທ່ານເຫັນບໍ່ ແມ່ນຫຍັງຄືບັນຫາໃນຄວາມຄິດຂອງອານົນ? ບົດຮຽນນີ້ຈະຊ່ອຍໃຫ້ທ່ານເຂົ້າໃຈວ່າ ເປັນຫຍັງພຣະເຢຊູຈຶ່ງເຫນືອກວ່າຜູ້ປະກາດພຣະທັມຫລືຄຣູສອນຄົນອື່ນໆ. ທ່ານຈະພົບຄວາມຈຳເປັນອັນສຳຄັນຫລາຍທີ່ແຕ່ລະຄົນຈະຕ້ອງຕອບຄຳຖາມນີ້ດ້ວຍຕົວຂອງເຂົາເອງດ້ວຍຄວາມຈິງໃຈ.

## <u>ສຶກສາພຣະຄັມພີ</u>

1. <u>ຄຳພຍານຂອງພວກສາວົກ</u> (ມາຣະໂກ 8:27-30)
   ເຂດເມືອງກາຍຊາເຣັຽຟີລິບປອຍ ຢູ່ທາງທິດເຫນືອຂອງທະເລຄາລີເລປະມານຊາວຫ້າໄມລ໌. ໂຂງເຂດນີ້ເປັນທິວທັດອັນສວຍງາມຕາມເນີນພູ ເຮີໂມນ (Hermon). ພຣະເຢຊູຊົງ ຖາມພວກສາວົກຂອງພຣະອົງ ດ້ວຍຄຳຖາມອັນສຳຄັນ "ຄົນທັງຫລາຍເວົ້າກັນວ່າເຮົາແມ່ນຜູ້ໃດ?"
   ພຣະອົງບໍ່ໄດ້ຊົງເປັນຜູ້ຢາກຮູ້ຢາກເຫັນ. ພຣະອົງຊົງນຳພາພວກສາວົກຂອງພຣະອົງໃຫ້ສຸມໃສ່ໃນເຣື່ອງລາວທີ່ພວກເຂົາຈະໄດ້ປະເຊີນເປັນທາງສ່ວນຕົວແລະພວກເຂົາຈະໄດ້ຮັບຜົນສະທ້ອນຕລອດໄປ. ມີຫລາຍຄົນຕິດຕາມຜູ້ນຳທາງສາສນາໂດຍບໍ່ຮູ້ຄັກປານໃດກ່ຽວກັບຜູ້ນຳຄົນນັ້ນ. ຜູ້ນຳບາງຄົນມີຄວາມສາມາດພິເສດ. ບາງຄົນຕິດຕາມຜູ້ນຳ ເພາະວ່າໄດ້ຍິນຄົນອື່ນເວົ້າຫລືວ່າຜູ້ນຳຄົນນັ້ນມີຊື່ສຽງ. ສາວົກຂອງພຣະເຢຊູບໍ່ໄດ້ຕິດຕາມພຣະອົງເຫມືອນກັບກໍຣະນີທີ່ກ່າວມານັ້ນ. ພຣະອົງຊົງເອີ້ນພວກເຂົາແລະໃນຄວາມເຊື່ອພວກເຂົາໄດ້ຕິດຕາມພຣະອົງ. ໃນຂນະທີ່ພວກເຂົາຕິດຕາມພຣະອົງ ພວກເຂົາສຳນຶກໄດ້ວ່າພຣະອົງຊົງແມ່ນຜູ້ໃດ. ພວກເຂົາພົບວ່າພຣະອົງນັ້ນຕ່າງກັນຫລາຍກັບຄົນທີ່ຢູ່ອ້ອມຂ້າງອ້ອມແອວຄືດ.
   ບໍ່ເປັນການເຂົ້າໃຈຍາກເລີຍວ່າ ເປັນຫຍັງຊາວຢິວຈຶ່ງເຫັນວ່າພຣະອົງ ແມ່ນຜູ້ນຶ່ງໃນພວກຜູ້ປະກາດພຣະທັມ.

ການຮັບໃຊ້ແລະການສັ່ງສອນຂອງພຣະອົງຄ້າຍຄືກັບການສັ່ງສອນຂອງຜູ້ປະກາດພຣະທັມບາງຄົນ. ໂຢຮັນບັບຕິສໂຕ ໄດ້ປະກາດກ່ຽວກັບເຣື່ອງຣາຊອານາຈັກຂອງພຣະເຈົ້າຢ່າງກ້າຫານ ເຊິ່ງເປັນຂໍ້ໃຫຍ່ໃຈຄວາມອັນດຽວກັນກັບຂອງພຣະອົງ. ກະສັດເຮໂຣດປະກາດວ່າພຣະເຢຊູແມ່ນໂຢຮັນບັບຕິສໂຕໄດ້ເປັນຄືນມາຈາກຕາຍ (ໃຫ້ເບິ່ງ ມັດທາຍ 14:1-3). ຊາວຢິວລໍຄອຍ ເອລີຢາ ຈະກັບມາແລະທຳການອັນໃຫຍ່ (ໃຫ້ເບິ່ງ ມາລາກີ 4:5-6). ໃນເມື່ອພຣະເຢຊູຊົງສະແດງສິ່ງມະຫັສຈັນ ພວກເຂົາຈຶ່ງສງົບສົນເທ້ລະຫວ່າງພຣະອົງແລະເອລີຢາ.
ເໝືອນກັນກັບໃນສມັຍຂອງພຣະອົງ ປະຈຸບັນນີ້ຍັງມີຄົນຈຳນວນຫລາຍຍັງຮັບຮູ້ວ່າພຣະອົງຊົງເປັນຄຣູສອນທີ່ດີເລີດຫລືວ່າເປັນຜູ້ປະກາດພຣະທັມ. ຖ້າຫາກວ່າພຣະອົງເປັນເໝືອນດັ່ງກັບພວກເຂົາເຂົ້າໃຈ ພວກເຮົາກໍບໍ່ມີພຣະຜູ້ໂຜດໃຫ້ພົ້ນ.
ຕໍ່ມາພຣະອົງຊົງຖາມພວກສາວົກຂອງພຣະອົງທາງສ່ວນຕົວວ່າ, "ພວກທ່ານເດ ວ່າເຮົາແມ່ນໃຜ?" ອັນນີ້ເປັນຄຳຖາມທີ່ແຕ່ລະຄົນຈະຕ້ອງຕອບໃນປະຈຸບັນນີ້. ຄຳຕອບຈາກຄວາມຈິງໃຈຂອງແຕ່ລະຄົນນັ້ນຈະບົ່ງບອກເຖິງເສັ້ນທາງຊີວິດອັນຕລອດໄປຂອງເຂົາເອງ.

ແມ່ນອັນໃດຄືຄວາມຈິງທີ່ສຳຄັນທີ່ສຸດກ່ຽວກັບພຣະເຢຊູອ້າງອີງຕາມພຣະທັມມາຣະໂກ 8:27-30? ເປັນຫຍັງ?

ເປໂຕທູນຕອບວ່າ, "ທ່ານແມ່ນພຣະຄຣິດ." ພຣະເມຊີອາ ແມ່ນມາຈາກພາສາເຮັບເຣີ ສຳລັບພາສາກຣີກແລ້ວແມ່ນ ພຣະຄຣິດ. ສອງຄຳນີ້ມີຄວາມໝາຍອັນດຽວກັນແປວ່າ "ຜູ້ທີ່ຖືກຫົດສົງ ຫລືວ່າຜູ້ທີ່ຖືກເລືອກ." ມັດທາຍໄດ້ໃຫ້ຂໍ້ສັງເກດວ່າ ແມ່ນພຣະບິດາຊົງເປີດເຜີຍໃຫ້ເປໂຕຮູ້ວ່າພຣະເຢຊູຊົງເປັນພຣະຄຣິດ (ໃຫ້ເບິ່ງມັດທາຍ 16:17). ດ້ວຍເຫດຜົນດັ່ງກ່າວນີ້ ຈຶ່ງເຊື່ອວ່າພຣະອົງນັ້ນເໜືອກວ່າຜູ້ປະກາດພຣະທັມອີກ. ພວກສາວົກຂອງພຣະອົງບໍ່ໄດ້ໃຫ້ຄວາມຄິດເຫັນຂອງຄົນອື່ນໆທີ່ຢູ່ອ້ອມຂ້າງອ້ອມແອວພວກເຂົາຊັກຊວນຄວາມຄິດຂອງພວກເຂົາກ່ຽວກັບເຣື່ອງຂອງພຣະເຢຊູວ່າພຣະອົງແມ່ນໃຜ. ພວກເຂົາຮູ້ຈັກພຣະອົງທາງສ່ວນຕົວ. ພຣະເຈົ້າຊົງເປີດເຜີຍຄວາມຈິງຂອງພຣະອົງໃຫ້ພວກເຮົາ ຕາບໃດພວກເຮົາຫາກສັດຊື່ແລະເຊື່ອຟັງພຣະອົງ.

ສຳລັບທ່ານແລ້ວພຣະເຢຊູແມ່ນໃຜ? ຄຳຖາມນີ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານ, ນິສັຍໃຈຄໍຂອງທ່ານ, ແລະຄຸນຄ່າຂອງທ່ານຢ່າງໃດ?

2. <u>ການໃຫ້ອະພັຍບາບ</u> (ກິຈການ 3:17-21)
ໃນຂະນະທີ່ເດີນທາງໄປພຣະວິຫານເພື່ອໄປອ້ອນວອນ ເປໂຕແລະໂຢຮັນໄດ້ພົບຄົນພິການຄົນນຶ່ງກຳລັງຂໍທານຢູ່. ຄົນພິການຄົນນັ້ນນຶກວ່າຈະໄດ້ເງິນຈາກພວກເພິ່ນ ພວກເພິ່ນມີສິ່ງທີ່ດີກວ່າເງິນຫລືຄຳອີກທີ່ຈະໃຫ້ລາວ. ເປໂຕສັ່ງໃຫ້ຄົນພິການນັ້ນວ່າ "ໃນພຣະນາມແຫ່ງພຣະເຢຊູຄຣິດໄທນາຊາເຣັດຈົ່ງຍ່າງໄປ" ແລະໃນທັນໃດນັ້ນ ຄົນຜູ້ນັ້ນ "ຍ່າງແລະເຕັ້ນພ້ອມສັຣເສີນພຣະເຈົ້າໄປ" (ກິຈການ 3:1-8). ຝູງຊົນຕ່າງກໍມາຫຸ້ມພວກເພິ່ນທັງສອງແລະອັສຈັນໃຈ (ຂໍ້ທີ 11). ເປໂຕຖວາຍກຽດໃຫ້ກັບພຣະເຈົ້າ. ໃນທຳນອງດຽວກັນ ພວກເຮົາຄວນຊອກຫາໂອກາດເຮັດອັນໃດໃຫ້ເປັນທີ່ຖວາຍກຽດແກ່ພຣະເຈົ້າ.
ການຮັກສາຄົນພິການໃຫ້ຫາຍດີໄດ້ຈັດຕຽມຝູງຊົນເພື່ອຈະຟັງການປະກາດຂອງເປໂຕ. ພວກເພິ່ນເຫັນການປ່ຽນແປງໃນຊາຍຄົນນັ້ນ. ການປ່ຽນແປງຊີວິດເປັນອຳນາດໃນການເປັນພຍານເຖິງອຳນາດຂອງພຣະເຈົ້າ. ຕອນເລີ້ມແລກ ເປໂຕປະກາດວ່າພຣະເຢຊູຊົງເປັນພຣະຄຣິດ (ມາຣະໂກ 8:29). ຄຳສາຣະພາບຂອງເພິ່ນຖືກຕ້ອງ ແຕ່ວ່າໃນຂະນະນັ້ນ ເພິ່ນຍັງບໍ່ທັນເຂົ້າໃຈວ່າພຣະເຢຊູຈະຕ້ອງທົນທຸກທໍຣະມານແລະສລະພຣະຊົນເພື່ອບາບຂອງພວກເຮົາ (ຂໍ້ທີ 31-33). ແຕ່ບັດນີ້ ເພິ່ນເຂົ້າໃຈແລ້ວວ່າພາຣະກິດຂອງພຣະຄຣິດໄດ້ສຳເຣັດແລ້ວ. ອັຄສາວົກຮູ້ວ່າພຣະເຢຊູຊົງເປັນອົງບໍຣິສຸດແລະຊອບທັມ (ກິຈການ 3:14), ຊົງເປັນເຈົ້າຊີວິດ (ຂໍ້ທີ 15), ແລະພຣະຄຣິດອົງຊົງ

ທົນທຸກທໍລະມານ (ຂໍ້ທີ 18). ເປໂຕປະກາດວ່າ ພວກເຂົາໄດ້ຂ້າພຣະຄຣິດເສັຽ, ແຕ່ວ່າ ພຣະເຈົ້າໄດ້ຊົງບັນດານ ໃຫ້ພຣະອົງເປັນຄືນມາຈາກຕາຍ (ຂໍ້ທີ 15). ເພິ່ນຮູ້ວ່າພວກຢິວ ໄດ້ເຮັດໄປຕາມຄວາມບໍ່ຮູ້. ພວກເຂົາບໍ່ຮູ້ເລີຍວ່າ ພວກເຂົາໄດ້ເຮັດໃຫ້ຄຳທຳນວາຍສຳເຣັດລົງ (ຂໍ້ທີ 18). ແຕ່ບັດນີ້ ພວກເຂົາຮູ້ແລ້ວ. ເພິ່ນບອກໃຫ້ພວກເຂົາວ່າ ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ແລ້ວຫລົບລ່າວຕ່າວຄືນ ມາຫາພຣະອົງ.

ການຖິ້ມໃຈເກົ່າເອົາໃຈໃຫມ່ບໍ່ພຽງແຕ່ສະແດງຄວາມເສັຽໃຈໃນສິ່ງທີ່ໄດ້ກະທຳໄປເທົ່ານັ້ນ. ຄວາມຄິດກ້າວສູ່ທິດທາງອຸປະນິສັຍໃຫມ່. ໃນກໍຣະນີນີ້ ແມ່ນໃຫ້ຫັນຫນີຈາກການເຮັດບາບແລະໄວ້ວາງໃຈເຊື່ອໃນພຣະເຢຊູ ອົງຊົງເປັນພຣະຄຣິດອົງທ່ຽງແທ້. ທາງນີ້ເປັນທາງໄປສູ່ສວັນແລະເປັນທາງໄປສູ່ສັນຕິສຸກໃນຊີວິດ. ຕອບສນອງຕໍ່ພຣະເຢຊູຢ່າງຖືກຕ້ອງໄດ້ນຳພຣະພອນອັນລົ້ນເຫລືອມາໃຫ້. ບໍ່ພຽງແຕ່ໄດ້ຮັບການອະພັຍບາບເທົ່ານັ້ນ ແຕ່ວ່າ ຍັງຈະພົບກັບ ເວລາແຫ່ງຄວາມພັກຜ່ອນຍ່ອນໃຈ. ບໍ່ມີອັນໃດເລີຍທີ່ຈະຍ່ອນໃຈໄປໄດ້ກັບຈິດວິນຍານທີ່ຖືກລ້າງໃຫ້ສະອາດ ປາສຈາກຄວາມຫນັກຫນ່ວງຂອງຄວາມບາບ.

ຈະເຮັດຢ່າງໃດຈຶ່ງຈະໄດ້ຮັບການອະພັຍບາບ (ຂໍ້ທີ 19)?

ພຣະທັມທີ່ໄດ້ບັນທຶກໄວ້ນີ້ໃຊ້ໄດ້ທຸກຍຸກທຸກສມັຍ. ເຖິງແມ່ນວ່າເປໂຕເຄີຍປະກາດໃຫ້ຊາວຢິວໃນສມັຍກ່ອນ ແຕ່ວ່າພຣະທັມຕອນນີ້ຍັງນຳມາປະກາດໃຫ້ຫມົດທຸກຄົນ (ໃຫ້ເບິ່ງ ກິຈການ 1:8; 2:17, 21,39). ພຣະເຈົ້າຊົງນຳແຕ່ລະຄົນເຂົ້າມາໃນຊີວິດຂອງພວກເຮົາ ພວກເຂົາໄດ້ປະກາດເຣື່ອງຂອງພຣະເຢຊູເພື່ອຈະຊ່ອຍໃຫ້ພວກເຮົາຮູ້ວ່າ ພຣະອົງນັ້ນແມ່ນຜູ້ໃດ ແລະພຣະອົງໄດ້ເຮັດອັນໃດແດ່ເພື່ອພວກເຮົາ. ການຕອບສນອງຕໍ່ພຣະອົງຢ່າງຖືກຕ້ອງນັ້ນ ຄືການຖິ້ມໃຈເກົ່າເອົາໃຈໃຫມ່ ເຊົາເຮັດບາບແລະໄວ້ວາງໃຈເຊື່ອໃນພຣະອົງ. ເວລານັ້ນຈະມາເຖິງ ເມື່ອພຣະເຢຊູຈະສະເດັດກັບມາແລະຄວາມບາບບໍ່ເຮັດໃຫ້ເປັນທຸກອີກ. ຈົນກວ່າເວລານັ້ນຈະມາເຖິງ ເວລາເມື່ອສິ່ງສາຣະພັດຈະຕັ້ງຂຶ້ນໃຫມ່, ເຫມືອນກັບເປໂຕ ພວກເຮົາຈະຕ້ອງສັດຊື່ໃນການປະກາດໃຫ້ກັບຄົນອື່ນວ່າ ພຣະເຢຊູສາມາດເຮັດໃຫ້ຊີວິດຂອງພວກເຂົາແຕກຕ່າງໄດ້.

ທ່ານໄດ້ຖິ້ມໃຈເກົ່າເອົາໃຈໃຫມ່ ກັບໃຈເຊົາເຮັດບາບແລະໄວ້ວາງໃຈເຊື່ອພຣະເຢຊູແລ້ວຫລືຍັງ?

3. <u>ພຣະພອນທີ່ພຣະສັນຍາໄດ້ເປັນທີ່ສຳເຣັດ</u> (ກິຈການ 3:22-26)

ເປໂຕໃຊ້ເວລາຍາວນານພໍສົມຄວນທີ່ຈະເຂົ້າໃຈວ່າພຣະເຢຊູຊົງເປັນພຣະຄຣິດ. ເພິ່ນສຳນຶກໄດ້ວ່າຄຳທັມນວາຍຂອງໂມເຊໄດ້ສຳເຣັດໃນພຣະເຢຊູ (ໃຫ້ອ່ານ ພຣະບັນຍັດສອງ 18:15-19). ຊາວຢິວທັງຫລາຍຖືກສອນໃຫ້ ເຊື່ອຟັງທຸກສິ່ງທີ່ເພິ່ນຈະບອກແກ່ ພວກເຂົາ. ເປໂຕໄດ້ຮຽນຮູ້ວ່າ ພວກເຮົາກໍຄວນຈະຕອບສນອງຕໍ່ພຣະເຢຊູຢ່າງນັ້ນ. ມີຫລາຍຄົນໃນສມັຍນີ້ ບໍ່ຕ່າງກັບເປໂຕເລີຍເມື່ອໄດ້ຍິນພຣະເຢຊູກ່າວແລ້ວພວກເຂົາກໍຍັງຮັບບໍ່ໄດ້. ເມື່ອພຣະອົງໄດ້ປະກາດທີ່ເມືອງກາຍຊາເຣັຽຟີລິບປອຍວ່າ ພຣະອົງຈະຕ້ອງທົນທຸກທໍຣະມານຫລາຍປະການຈົນເຖິງແກ່ຄວາມມໍຣະນາ, ໃນຂນະນັ້ນເປໂຕບໍ່ສາມາດຮັບເອົາໄດ້. ພຣະອົງ "ກໍຊົງຕິເປໂຕຢ່າງແຂງແຮງ" ເພາະວ່າເພິ່ນ "ຄຶດຢ່າງມະນຸດ ບໍ່ຄຶດຢ່າງພຣະເຈົ້າ" (ມາຣະໂກ 8:31-33).

ໃນວັນເພັນເຕຄໍສະເຕ ເປໂຕໄດ້ກ່າວຕໍ່ປະຊາຊົນທັງຫລາຍວ່າ ເພິ່ນໄດ້ພົບວ່າສິ່ງທີ່ກ່ຽວກັບພຣະເຢຊູນັ້ນເປັນຄວາມຈິງ. ເພິ່ນໄດ້ປະກາດວ່າພຣະອົງນັ້ນຊົງເປັນຜູ້ທີ່ ບັນດາຜູ້ປະກາດພຣະທັມທີ່ໄດ້ກ່າວໄວ້ ນັບຕັ້ງແຕ່ຊາມູເອັນເປັນລຳດັບມາ ໄດ້ກ່າວເຖິງ. ການປະກາດຢ່າງນີ້ເປັນພຍານໃຫ້ເຫັນວ່າພຣະເຢຊູນັ້ນເຫນືອກວ່າຜູ້ປະກາດພຣະທັມຫລືຄຣູບາອາຈານທີ່ດີຫລາຍຄົນຕາມທີ່ມີຫລາຍຄົນໄດ້ອ້າງຕົນໃນສມັຍນີ້.

ພຣະຜູ້ເປັນເຈົ້າຊົງປະທານຄວາມຫວັງໃຫມ່ໃຫ້ແກ່ມະນຸດຊາດ ໂດຍສົ່ງພຣະບຸດຂອງພຣະອົງເຂົ້າມາໃນໂລກນີ້. ການຄືນພຣະຊົນຂອງພຣະເຢຊູເປັນການພິສູດອັນແນ່ນອນໃຫ້ເຫັນວ່າ ພຣະອົງບໍ່ແມ່ນຜູ້ປະກາດພຣະທັມທັມດາ

ຫລືຄຣູສອນທີ່ປະເສີດເທົ່ານັ້ນ. ພຣະອົງຊົງເປັນພຣະຄຣິດແທ້ທີ່ມີຄຸນຄ່າສູງສົມກັບຄວາມເຊື່ອຂອງພວກເຮົາ. ເປໂຕຢາກໃຫ້ຜູ້ທີ່ຟັງເພິ່ນຮູ້ວ່າ "ເພື່ອອວຍພຣະພອນແກ່ພວກທ່ານ". ພຣະເຈົ້າຊົງໃຊ້ພຣະເຢຊູມາຍັງພວກເພິ່ນກ່ອນ. ພວກເພິ່ນເປັນພາກສ່ວນຂອງການສຳເຣັດໃນພຣະສັນຍາ ຄືໄດ້ຊົງກ່າວກັບອັບຣາຮາມວ່າ "ຄອບຄົວທັງຫມົດທົ່ວແຜ່ນດິນໂລກຈະໄດ້ຮັບພຣະພອນເພາະເຊື້ອສາຍຂອງເຈົ້າ.
ພຣະເຢຊູສະເດັດມາເພື່ອໃຫ້ທຸກຄົນ ຫັນກັບຈາກການຊົ່ວຮ້າຍຂອງຕົນ. ຄວາມບາບໄດ້ກີດກັ້ນພວກເຮົາຈາກພຣະພອນ. ໃນພຣະເຢຊູນັ້ນ ສິ່ງທີ່ຂັດຂວາງພຣະພອນຂອງພຣະເຈົ້າໄດ້ຖືກຍົກອອກໄປ. ເປັນພຣະພອນອັນເລີດລ້ຳທີ່ໄດ້ຖືກເຮັດໃຫ້ເປັນອິສຣະຈາກຄວາມບາບທັງສິ້ນ.
ເປໂຕໄດ້ປະກາດໃຫ້ຊາວຢິວໃນສັຕວັດທີນີ້ງວ່າ ພຣະສັນຍາທີ່ໄດ້ໃຫ້ກັບອັບຣາຮາມໄດ້ແກ່ທຸກຄົນທີ່ເຊື່ອໃນພຣະເຢຊູນັ້ນເປັນຄວາມຈິງ. ອັບຣາຮາມເປັນຜູ້ຊອບທັມ ບໍ່ແມ່ນເພິ່ນເປັນຄົນຢິວແຕ່ຍ້ອນຄວາມເຊື່ອຂອງເພິ່ນ (ເຮັບເຣີ 11:8-10, 39). ຜູ້ທີ່ເຊື່ອໃນພຣະເຢຊູໃນສມັຍນີ້ ບໍ່ວ່າລາວຈະເປັນຄົນຢິວຫລືບໍ່ເປັນຢິວກໍຕາມ ລາວກໍຈະໄດ້ຮັບມໍຣະດົກ ຄືພຣະສັນຍາອັນດຽວກັນ. ພວກເຮົາໄດ້ຮັບພຣະພອນດ້ວຍວ່າພຣະຄຣິດໄດ້ຊົງກະທຳເພື່ອພວກເຮົາແລ້ວ.

ແມ່ນຜູ້ໃດເປັນຜູ້ໄດ້ຮັບມໍຣະດົກຈາກອັບຣາຮາມຢ່າງແທ້ຈິງ? ແມ່ນມໍຣະດົກອັນໃດເປັນຂອງພວກເຂົາ?

ຄົນອື່ນໄດ້ເວົ້າເຣື່ອງພຣະເຢຊູໃຫ້ພວກເຮົາຟັງ ແລະກ່າວເຖິງການກະທຳຂອງພຣະອົງເພື່ອພວກເຮົາໂດຍຊົງສລະພຣະຊົນທີ່ໄມ້ກາງແຂນ. ພວກເຮົາໄດ້ຮັບພຣະພອນດ້ວຍຊີວິດອັນຕລອດໄປເປັນນິດ ໂດຍການຕອບສນອງຕໍ່ຂ່າວປະເສີດດ້ວຍການກັບໃຈເສັຽໃຫມ່ແລະເຊື່ອໃນພຣະອົງ. ໃນທຳນອງດຽວກັນພວກເຮົາສາມາດໃຫ້ພອນຄົນອື່ນໄດ້ໂດຍເວົ້າເຣື່ອງຂ່າວປະເສີດນີ້ໃຫ້ຄົນຕໍ່ໆໄປຟັງ. ພຣະອົງສະເດັດມາກໍເພື່ອອວຍພອນໃຫ້ແກ່ພວກເຮົາ ບໍ່ແມ່ນມາຕັດສິນລົງໂທດພວກເຮົາ. ພວກເຮົາໄດ້ຮັບພອນຖ້າພວກເຮົາຫາກຮັບເອົາພຣະອົງ.
ຢູ່ວົງນອກຂອງກຸ່ມຄຣິສຕຽນ ຕ່າງຄົນກໍມີຄວາມຄິດເຫັນແຕກຕ່າງກັນກ່ຽວກັບພຣະເຢຊູ. ບາງກຸ່ມເວົ້າວ່າພຣະອົງເປັນພຽງແຕ່ຜູ້ປະກາດພຣະທັມທັມດາ ຫລືຄຣູທີ່ດີ. ພວກເຮົາໄດ້ຮຽນຮູ້ອັນໃດແດ່ໃນບົດຮຽນອາທິດນີ້ ກ່ຽວກັບທາດແທ້ຂອງພຣະອົງ?

- ພຣະເຢຊູຊົງເຫນືອກວ່າຜູ້ປະກາດພຣະທັມຫລືຄຣູທີ່ດີ. ພຣະອົງຊົງເປັນພຣະຄຣິດຕາມທີ່ພວກຜູ້ປະກາດພຣະທັມໄດ້ກ່າວໄວ້.
- ພຣະເຢຊູຊົງສລະພຣະຊົນທີ່ໄມ້ກາງແຂນເພື່ອຄວາມບາບຂອງພວກເຮົາ ແລະພຣະເຈົ້າໄດ້ຊົງບັນດານໃຫ້ພຣະອົງຄືນມາມີຊີວິດ.
- ການທີ່ຮູ້ວ່າພຣະເຢຊູເປັນຜູ້ໃດ ໄດ້ຮຽກຮ້ອງໃຫ້ພວກເຮົາຕອບສນອງທາງສ່ວນຕົວ.
- ພວກເຮົາຈະຕ້ອງກັບໃຈຈາກຄວາມບາບຂອງພວກເຮົາແລະເຊື່ອໃນພຣະອົງ ເພື່ອຄວາມບາບຂອງພວກເຮົາຈະຖືກໃຫ້ອະພັຍ.
- ຕອບສນອງຕໍ່ພຣະເຢຊູຢ່າງຖືກຕ້ອງ ຜົນທີ່ໄດ້ຮັບກໍຄືພຣະພອນຝ່າຍຈິດວິນຍານອັນລົ້ນເຫລືອ.

(ອຸປຖັມໂດຍ ລຊບສ www.lsbf.org)